BANK OF THE LAO PDR
ທະນາຄານແຫ່ງ ສປປ ລາວ
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ທະນາຄານແຫ່ງລັດ ຫວຽດນາມ ແລະ ທະນາຄານແຫ່ງ ສປປ ລາວ ເພີ່ມທະວີສາຍພົວພັນຮ່ວມມືຜ່ານການແຂ່ງຂັນກິລາມິດຕະພາບ



ໃນລະຫວ່າງ ວັນທີ 16-17 ສິງຫາ 2024 ຜ່ານມານີ້ ທີ່ ນະຄອນຫຼວງວຽງຈັນ. ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງລັດ ຫວຽດນາມ (ທຫວ) ໄດ້ຮ່ວມກັນຈັດການແຂ່ງຂັນກິລາມິດຕະພາບ ລະຫວ່າງ ສອງຝ່າຍຂຶ້ນ ໂດຍການເປັນປະທານຮ່ວມເປີດພິທີຂອງການນຳທັງສອງຝ່າຍຄື: ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ ແລະ ທ່ານ ດາວ ມິງ ຕູ (ĐÀO MINH TÚ) ຮອງຜູ້ວ່າການ ທຫວ ພ້ອມດ້ວຍການເຂົ້າຮ່ວມຂອງທ່ານ ກ່າວ ວັນ ບິງ (CAO VĂN BÌNH) ປະທານກຳມະບານທະນາຄານສູນກາງ, ຄະນະກົມ, ຄະນະພະແນກ, ນັກກິລາຈາກທະນາຄານທຸລະກິດ ສສ. ຫວຽດນາມ ຢູ່ ສປປ ລາວ, ນັກກິລາຈາກທະນາຄານທຸລະກິດລາວ, ນັກກິລາຂອງສອງທະນາຄານກາງ ແລະ ຜູ້ຊົມເຊຍກິລາ ເຂົ້າຮ່ວມຫຼາຍກວ່າ 200 ທ່ານ.

ການແຂ່ງຂັນກິລາມິດຕະພາບ ປະຈຳປີ 2024 ລະຫວ່າງ ທຫວ ແລະ ທຫລ ໃນຄັ້ງນີ້ແມ່ນໄດ້ຈັດຂຶ້ນເປັນຄັ້ງທີ 10 ເຊິ່ງເປັນກິດຈະກຳທີ່ຈັດຂຶ້ນຕາມແຜນການເຄື່ອນໄຫວຮ່ວມມືຂອງທັງສອງຝ່າຍ ເພື່ອເປັນການແລກປ່ຽນວັດທະນະທຳ ແລະ ເສີມສ້າງຄວາມສາມັກຄີຂອງສອງປະເທດ ລະຫວ່າງ ສສ. ຫວຽດນາມ ແລະ ສປປ ລາວ ເວົ້າລວມ ແລະ ລະຫວ່າງ ທະນາຄານກາງຂອງສອງປະເທດເວົ້າສະເພາະ. ການແຂ່ງຂັນກິລາໃນປີນີ້ ຊຶ່ງປະກອບມີ ການແຂ່ງຂັນບານເຕະ ຍິງ-ຊາຍ, ກິລາຕີປິ່ງປ່ອງ, ຕີດອກປີກໄກ່ ແລະ ຊັດລູກດອກ ລະຫວ່າງ ທະນາຄານກາງ ແລະ ທະນາຄານທຸລະກິດຂອງ ສປປ ລາວ ແລະ ສສ. ຫວຽດນາມ ໄດ້ດຳເນີນໄປດ້ວຍບັນຍາກາດທີ່ເບີກບານມ່ວນຊື່ນ ແລະ ມີໄມຕີຈິດມິດຕະພາບລະຫວ່າງກັນ ເຮັດໃຫ້ພະນັກງານມີຄວາມຮັກແພງ ແລະ ຮັດແໜ້ນຄວາມສາມັກຄີຫຼາຍຂຶ້ນຕື່ມ.







ການແຂ່ງຂັນກິລາມິດຕະພາບ ລະຫວ່າງ ທຫລ ແລະ ທຫວ ໄດ້ດຳເນີນໄປເປັນເວລາ 02 ວັນ ແລະ ເຕັມໄປດ້ວຍບັນຍາກາດຟົດຟື້ນເບີກບານມ່ວນຊື່ນ, ນັກກິລາແຂ່ງຂັນດ້ວຍນ້ຳໃຈນັກກິລາ, ມີຄວາມຕື່ນຕາຕື່ນໃຈ ແລະ ການຕັດສິນຂອງກຳມະການກໍ່ເປັນໄປດ້ວຍຄວາມຍຸດຕິທຳ ຊຶ່ງເຮັດໃຫ້ການແຂ່ງຂັນສຳເລັດລົງດ້ວຍໝາກຜົນອັນຈົບງາມ ແລະ ເຕັມໄປດ້ວຍໄມຕີຈິດມິດຕະພາບ ລະຫວ່າງນັກກິລາ.

**# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**